# ບົດທີ 24

## ການວິໄຈ: ການສຳຫຼວດລາຍການ

ທ່ານໄດ້ອ່ານພະທຳກິດຈະການໃນບົດ 23 ນັ້ນເພື່ອຈະຫາຫຼັກການມາແຍກ ດັ່ງນັ້ນທ່ານຮູ້ເລື່ອງທົ່ວໄປໃນພະທຳ ກິດຈະການແລ້ວ. ຕໍ່ໄປເຮົາຈະສຶກສາຢ່າງສະເພາະ.

**1** ກ. ບາດກ້າວທຳອິດໃນການວິໄຈພະທຳກິດຈະການຄືການຊອກຫາຫຍັງທີ່ເໝາະສົມທີ່ສຸດ?

________________________________________________

ຂ. ໃນການວິໄຈພະທຳກິດຈະການ ເຮົາເລືອກຫຼັກການໃດແລ້ວ? ________________

**2** ຖ້າເຮົາຈະຄົ້ນຄວ້າຕາມພູມສາດ ເຮົາຈະຕ້ອງສັງເກດຮູ້ວ່າເຫດການຕ່າງ ໆ ເກີດມີຂຶ້ນມາໃນສະຖານທີ່ໃດ ໆ. ເຊັ່ນດຽວກັນ ຖ້າເຮົາຈະຄົ້ນຄວ້າຕາມຊີວະປະຫວັດ ເຮົາຈະຕ້ອງສັງເກດຮູ້ວ່າບຸກຄົນໃດເປັນຜູ້ສຳຄັນ ໃນແຕ່ລະປະການ. ເຮົາຕັດສິນໃຈແລ້ວວ່າ ຈະວິໄຈຕາມພູມສາດ ດັ່ງນັ້ນຈະຕ້ອງສັງເກດຢ່າງໃດຈຶ່ງຈະແຍກສ່ວນໄດ້? ____________________________

**3** ບາງເທື່ອພະຄຳພີບອກສະຖານທີ່ໂດຍກົງ ບາງເທື່ອບໍ່ບອກເລີຍ ບາງເທື່ອບອກສະຖານທີ່ທາງອ້ອມ. ໃຫ້ອ່ານ ກຈກ 3:1

ກ. ເປໂຕກັບໂຢຮັນຈະເຂົ້າບ່ອນໃດ? ____________________________________

ຂ. ພະວິຫານນັ້ນຢູ່ໃນກຸງໃດ? ________________________________________

ຄ. ກຈກ 3:1 ອ້າງເຖິງຕຶກໃດໂດຍກົງ? ___________________________________

ງ. ເຮົາຮູ້ໂດຍທາງອ້ອມວ່າຢູ່ກຸງໃດ? ____________________________________

**4** ຍົກຕົວຢ່າງອີກປະການໜຶ່ງຈາກ ກຈກ 3:11

ກ. ລະບຽງຊະໂລໂມນນັ້ນຢູ່ຕິດກັບຕຶກໃດ? ________________________________

ຂ. ເຮົາຮູ້ໂດຍທາງອ້ອມວ່າ ເຫດການນັ້ນເກີດຂຶ້ນມາໃນກຸງໃດ? ________________

**5** ທ່ານຍິ່ງຮູ້ພະຄຳພີແລ້ວ ທ່ານຈະຍິ່ງຮູ້ຫາຫຼັກຖານທາງອ້ອມ.ໃນລາຍຊື່ຂໍ້ພະຄຳພີຕໍ່ໄປນີ້ ບໍ່ໄດ້ບອກຊື່ເມືອງແຕ່ເຮົາຮູ້ ໄດ້ໂດຍຫຼັກຖານທາງອ້ອມ. ໃຫ້ທ່ານເປີດອ່ານຂໍ້ພະຄຳພີຕໍ່ໄປນີ້ ແລະຂຽນຫຼັກຖານທີ່ກ່າວໂດຍກົງແລ້ວຂຽນຊື່ເມືອງ ທີ່ເຮົາຈະຮູ້ໄດ້ໂດຍທາງອ້ອມ.

ກ. ກຈກ 4:1 ສະເໜີຫຼັກຖານໃດໂດຍກົງ? ____________________________

ເຮົາຮູ້ໂດຍທາງອ້ອມວ່າຢູ່ກຸງໃດ? ________________________

ຂ. ກຈກ 5:12 ຮູ້ສະຖານທີ່ໃດໂດຍກົງ? ______________________________

ຢູ່ໃນກຸງໃດ? ______________________________________

ຄ. ກຈກ 5:27 ເຂົາຢືນຢູ່ຕໍ່ໜ້າໃຜ? __________________________________

ດັ່ງນັ້ນເຮົາຈະຮູ້ວ່າຢູ່ກຸງໃດ? ____________________________

ງ. ກຈກ 10:30 ຢູ່ໃນເຮືອນໃຜ? (ໂດຍກົງ) ______________________________
ຢູ່ເມືອງໃດ? (ທາງອ້ອມ) ______________________________

ຈ. ກຈກ 17:22 ໂປໂລເວົ້າກັບຊາວໃດ? ______________________________
ສະແດງວ່າຢູ່ກຸງໃດ? ______________________________

ສ. ກຈກ 19:34 ອ້າງເຖິງຊາວໃດ? ______________________________
ຢູ່ເມືອງໃດ? ______________________________

ຂໍ້ເຫຼົ່ານັ້ນບໍ່ໄດ້ບອກຊື່ເມືອງ ແຕ່ເຮົາຮູ້ໄດ້ໂດຍທາງອ້ອມ.

**6** ຄວາມໃດຕໍ່ໄປນີ້ ເປັນຫຼັກຖານວ່າຈະອ້າງເຖິງກຸງເຢລູຊາເລັມ? (ເລືອກ)

ກ. ______ ທີ່ອ້າງເຖິງມະຫາປະໂລຫິດ

ຂ. ______ ທີ່ອ້າງເຖິງພະວິຫານ

ຄ. ______ ທີ່ອ້າງເຖິງສານສູງສຸດຂອງຊາດຢິວ

ງ. ______ ທີ່ອ້າງເຖິງລະບຽງຂອງຊະໂລໂມນ

ຈ. ______ ທີ່ອ້າງເຖິງຄົນເປັນງ່ອຍ



**7** ໃຫ້ອ່ານໃນຮູບກາຕູນຢູ່ ໜ້າ 234. ເລື່ອງ ກຈກ ບົດທີ 1 ເຫດການນັ້ນເກີດຂຶ້ນໃນກຸງໃດ? ______________________________ (ບໍ່ຕ້ອງອ່ານສ່ວນທີ່ມີຫົວເລື່ອງ "ການອ່ານເທື່ອທຳອິດ" ເພາະມາເຖິງນີ້ທ່ານກຳລັງອ່ານເປັນເທື່ອທີສອງແລ້ວ)

**8** ໃຫ້ອ່ານແຕ່ສະເພາະຮູບ ກ ແລະ ຂ ໃນໜ້າຕໍ່ໄປ ທີ່ບັນລະຍາຍເລື່ອງ ກຈກ ບົດທີ 2. ເຫດການໃນ ກຈກ ບົດທີ 2 ນີ້ ເກີດຂຶ້ນບ່ອນໃດ? (ກຈກ 2:5 ແລະ 2:14) ____________

**9** ກິດຈະການບົດ 3 ແລະ 4 ກ່າວເລື່ອງບ່ອນໃດ? (ກຈກ 3:1 ອ້າງເຖິງຕຶກທີ່ຢູ່ໃນກຸງໃດ)

______________________________________________

**10** ໃນເລື່ອງ ກຈກ 5:1-11 ບໍ່ໄດ້ບອກສະຖານທີ່ ແຕ່ ກຈກ 5:12 ບອກທີ່ຢູ່ຂອງພວກສາວົກໂດຍກົງ. ບ່ອນນັ້ນຢູ່ໃນກຸງໃດ? ______________________________

**11** ເຫດການໃນ ກຈກ 5:12-42 ເກີດຂຶ້ນຢູ່ກຸງໃດ? (ກຈກ 5:16) ____________________

**12** ເຫດການໃນຮູບກາຕູນ ໜ້າ 239 ເກີດຂຶ້ນຢູ່ໃສ? (ກຈກ 6:7) ____________________

**13** ກິດຈະການ ບົດທີ 8 ລາຍງານຫຼາຍເລື່ອງຈາກຫຼາຍບ່ອນ. ໃຫ້ທ່ານຈົດແຕ່ລະສະຖານທີ່ຕໍ່ໄປນີ້:

ກ. ກຈກ 8:5 ກ່າວເຖິງແຂວງໃດ? ______________________________

ຂ. ກຈກ 8:26 ເພິ່ນຈະໄປໃສ? ______________________________

ຄ. ກຈກ 8:40 ໄປອີກສອງບ່ອນໃດ? ________________ ແລະ ________________

**14** ໃນ ກຈກ 9:1-31 ຕາມຮູບກາຕຸນ ໜ້າ 241 ຍົກຊື່ບ່ອນໃດແດ່?

ກຈກ 9:3 ______________________________

ກຈກ 9:26 ______________________________

ກຈກ 9:30 ______________________________

(ໝາຍເຫດ: ກຈກ 11:25 ກ່າວເລື່ອງທີ່ບາລະນາບາໄປຫາໂຊໂລ ຈາກຕາໂຊເອົາໄປອັນຕີໂອເຂຍ ແຕ່ບໍ່ແມ່ນ ໃນເວ ລາດຽວນີ້.)

ໃຫ້ທ່ານສັງເກດ 4 ບ່ອນນັ້ນຕາມແຜນທີ່ຮູບ ສ ໜ້າ 241 ນັ້ນ.

**15** ໃຫ້ທ່ານຮຽນຮູ້ເລື່ອງໃນຮູບກາຕຸນ ໜ້າ 242 ດີ ໆ ຈາກ ກຈກ 9:32 ເຖິງ 12:25.

ກ. ໃຫ້ຈົດ 4 ບ່ອນທີ່ເປໂຕໄປ:

ກຈກ 9:32 ______________________________

ກຈກ 9:36 ______________________________

ກຈກ 10:24 ______________________________

ກຈກ 11:2 ______________________________

(ໃຫ້ທ່ານສັງເກດທັງ 4 ບ່ອນນັ້ນໃນແຜນທີ່ "ກ" ໜ້າ 242)

ຂ. ຫຼັງຈາກໂປໂລອອກຈາກຕາໂຊເພິ່ນໄປໃສ? (ກຈກ 11:25-26) ______________

**16** ໃຫ້ເປີດເບິ່ງແຜນທີ່ ໜ້າ 243. ແຜນທີ່ນັ້ນຊີ້ແຈງທີ່ໂປໂລໄປປ່າວປະກາດເທື່ອທີໜຶ່ງ.

ໃຫ້ຈົດທຸກເມືອງທີ່ໂປໂລໄປ.

(ກ່ຽວກັບ ອັນຕີໂອເຂຍ ມີສອງບ່ອນ ດັ່ງນັ້ນ ທ່ານຈໍາເປັນຕ້ອງບອກແຂວງດ້ວຍ.)

ກ. ກຈກ 13:1 ______________________________

ຂ. ກຈກ 13:4 ______________________________

ຄ. ກຈກ 13:14 ______________________________

ງ. ກຈກ 13:14 ______________________________

ຈ. ກຈກ 13:51 ______________________________

ສ. ກຈກ 14:20 ______________________________

ຊ. ກຈກ 14:21 ______________________________

**17** ແຜນທີ່ ໜ້າ 244 ສະແດງທາງທີ່ໂປໂລເດີນໄປໃນເທື່ອທີສອງທີ່ອອກໄປປ່າວປະກາດພະທໍາ (ຮ່ວມກັນກັບຊີລາ) ໃຫ້ ທ່ານຈົດຊື່ແຕ່ລະບ່ອນທີ່ໄປເທື່ອທີສອງນັ້ນ. ໃຫ້ຈົດຕາມລໍາດັບໃນແຜນທີ່ ______________________________

______________________________

______________________________

______________________________

______________________________

**18** ຮູບກາຕູນ ໜ້າ 245 ຊີ້ບອກທາງທີ່ໂປໂລອອກໄປປ່າວປະກາດເທື່ອທີສາມຄືເທື່ອສຸດທ້າຍ. ໃຫ້ທ່ານຈົດທຸກບ່ອນ ທີ່ ເພິ່ນໄປ (ຕາມແຜນທີ່) ______________________________

________________________________________________________________

**19** ໃຫ້ທ່ານຈື່ເລື່ອງໃນຮູບ ໜ້າ 246 ທີ່ກ່າວເລື່ອງໃນ ກຈກ 21:18 ເຖິງ ທ້າຍບົດທີ 26.

ກ. ໃນ ກຈກ 21:27 ໂປໂລຢູ່ກຸງໃດ? ______________________________________

ຂ. ໃນ ກຈກ 23:23 ໄປໃສ? ___________________________________________

**20** ໃຫ້ອ່ານໃນຮູບກາຕູນ ໜ້າ 247 ທັງເບິ່ງແຜນທີ່ດ້ວຍ. ໃຫ້ຈົດບ່ອນຕ່າງໆ ທີ່ໂປໂລແວະໃນສະພາບເປັນນັກ ໂທດ. ____________________________________________

________________________________________________________________

(ເຂົາໄປໃກ້ກັບເກາະກຸບໂລ ແຕ່ບໍ່ໄດ້ແວະ)

*ໃນບົດທີ 23 ທ່ານໄດ້ຄົ້ນຄວ້າວ່າ ຈະວິໄຈເລື່ອງພະທຳກິດຈະການຢ່າງໃດ ຈະໃຊ້ຫຼັກການແຍກຕາມຊີວະປະຫວັດ ຕາມຫຼັກໂອວາດ ຕາມແຕ່ລະຫົວເລື່ອງ ຫຼື ຕາມພູມສາດ! ເຫັນວ່າສະເພາະພະທຳກິດຈະການນີ້ ແຍກຕາມພູມສາດດີກວ່າ. ໃນບົດທີ 24 ນີ້ ທ່ານໄດ້ສຳຫຼວດລາຍການເລື່ອງທີ່ສຳຄັນກ່ຽວກັບສະຖານທີ່ຕ່າງ ໆ ໃນພະທຳກິດຈະການ.*

*ບົດທີ 24 ກໍບໍ່ມີເສັງ!*

## ຄຳຕອບ:

**1** *ກ. ຫຼັກການແຍກສ່ວນ (ຫຼັກການວິໄຈກໍໄດ້) ຂ. ຕາມພູມສາດ*

**2** *ສະຖານທີ່*

**3** *ກ. ບໍລິເວນພະວິຫານ ຂ. ເຢລູຊາເລັມ ຄ. ພະວິຫານ ງ. ກຸງເຢລູຊາເລັມ*

**4** *ກ. ພະວິຫານ ຂ. ເຢລູຊາເລັມ*

**5** *ກ. ທະຫານຮັກສາພະວິຫານ ເຢລູຊາເລັມ ຂ. ລະບຽງຂອງຊະໂລໂມນ ເຢລູຊາເລັມ*
*ຄ. ທີ່ປະຊຸມ ມະຫາປະໂລຫິດ ເຢລູຊາເລັມ ງ. ໂກເນລີໂອ ກາຍຊາເລຍ*
*ຈ. ຊາວກຸງອາແຖນ ກຸງອາແຖນ ສ. ຊາວເອເຟໂຊ ເມືອງເອເຟໂຊ*

**6** *ກ ຂ ຄ ງ ຖືກ*

**7** *ເຢລູຊາເລັມ*

**8** *ເຢລູຊາເລັມ*

**9** *ເຢລູຊາເລັມ*

**10** *ເຢລູຊາເລັມ*

**11** *ເຢລູຊາເລັມ*

**12** *ເຢລູຊາເລັມ*

**13** *ກ. ຊາມາເລຍ ຂ. ເມືອງຄາສາ ຄ. ເມືອງອາໂຊໂຕ ແລະ ເມືອງກາຍຊາເລຍ*

**ຄຳຕອບ (ຕໍ່):**

**14** *ດາມາເຊ ເຢລູຊາເລັມ ກາຍຊາເລຍ ແລະ ຕາໂຊ*

**15** *ກ. ລິດດາ ຢົບເປ ກາຍຊາເລຍ ເຢລູຊາເລັມ ຂ. ອັນຕີໂອເຂຍ*

**16** *ກ. ອັນຕີໂອເຂຍ (ຊີເລຍ) ຂ. ເກາະກຸບໂລ ຄ. ເປເຄ*
*ງ. ອັນຕີໂອເຂຍໃນແຂວງປີຊີເດຍ ຈ. ອີໂກນີອັນ ສ. ເດລະເບ ຊ. ລີຊະທາ*

**17** *ອັນຕີໂອເຂຍແຂວງຊີເລຍ, ເດລະເບ, ລີຊະທາ, ຟີລິບປອຍ, ເທຊະໂລນີກ, ອາແຖນ, ໂກລິນໂທ, ເອເຟໂຊ, ກາຍຊາເລຍ, ເຢລູຊາເລັມ, ແລ້ວກັບໄປອັນຕີໂອເຂຍແຂວງຊີເລຍ.*

**18** *ອັນຕີໂອເຂຍແຂວງຊີເລຍ, ເອເຟໂຊ, ຟີລິບປອຍ, ມີເລໂຕ, ຕີໂລ, ກາຍຊາເລຍ, ເຢລູຊາເລັມ.*

**19** *ກ. ເຢລູຊາເລັມ ຂ. ກາຍຊາເລຍ*

**20** *ກາຍຊາເລຍ, ຊີໂດນ, ເກາະກະເລເຕ, ເກາະເມລີຕາ, ກຸງໂລມ.*